ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີສະເຫຼີມສະຫຼອງວັນທ້ອນເງິນອາຊຽນ







ໃນຕອນບ່າຍຂອງວັນທີ 12 ພະຈິກ 2020, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດພິທີສະເຫຼີມສະຫຼອງວັນທ້ອນເງິນອາຊຽນ (ASEAN SAVING DAY) ຂຶ້ນທີ່ຕະຫຼາດຫຼັກຊັບລາວ. ໂດຍການໃຫ້ກຽດເປັນປະທານຂອງທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທຫລ, ທ່ານນາງ ສີຣິກິດ ບຸບຜາ, ຮອງປະທານສູນກາງສະຫະພັນແມ່ຍິງລາວ ແລະ ມີຜູ້ເຂົ້າຮ່ວມຈາກ ທຫລ, ອົງການຈັດຕັ້ງສາກົນ, ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ແລະ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດລວມທັງໝົດ 70 ທ່ານ.

ພິທີຈັດຂຶ້ນແມ່ນກົງກັບມື້ດຽວກັນກັບວັນທ້ອນເງິນໂລກ (ວັນທີ 31/10), ເປັນມື້ທີ່ທົ່ວລະບົບທະນາຄານ ແລະ ສະຖາບັນການເງິນໃນພາກພື້ນອາຊຽນ ແລະ ໃນໂລກ ໄດ້ຮັບການຈັດຕັ້ງສະເຫຼີມສະຫຼອງມາແຕ່ປີ 1924. ໂດຍເປັນການປູກຈິດສຳນຶກໃຫ້ແກ່ມວນຊົນຂອງໂລກ ກໍ່ຄືຄວາມສຳຄັນຂອງການທ້ອນເງິນໃນ ສປປ ລາວ ແລະ ເປັນພື້ນຖານໃນການສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນ. ນອກຈາກນັ້ນ, ຍັງຈະເປັນການກະຕຸກຊຸກຍູ້ສະຖາບັນການເງິນ ໃຫ້ອອກແບບຜະລິດຕະພັນເງິນຝາກທີ່ແທດເໝາະກັບຄວາມຕ້ອງການຂອງປະຊາຊົນຫຼາຍຂຶ້ນ ເຮັດໃຫ້ການເຂົ້າເຖິງການບໍລິການທາງດ້ານການເງິນມີການເພີ່ມຂຶ້ນຕາມລຳດັບ.

ທ່ານຮອງຜູ້ວ່າການ ທຫລ ໄດ້ມີຄຳເຫັນບາງຕອນວ່າ: “...ສຳຫຼັບ ສປປ ລາວ, ການທ້ອນເງິນສາມາດຕີລາຄາລວມ ແມ່ນກວມເອົາປະມານ 48,33 % ຂອງຈີດີພີ (ປີ 2018), ແຕ່ຢ່າງໃດກໍຕາມໃນຕໍ່ໜ້າວຽກງານການທ້ອນເງິນຕ້ອງໃຫ້ມີການຂະຫຍາຍເພີ່ມຂຶ້ນ ແລະ ມີປະສິດທິຜົນຫຼາຍກວ່າເກົ່າ; ສິ່ງດັ່ງກ່າວສະທ້ອນໃຫ້ເຫັນວ່າສິ່ງທ້າທາຍໃນການພັດທະນາຂະແໜງການເງິນຂອງ ສປປ ລາວ ເປັນການສະໜອງທາງເລືອກໃນການທ້ອນເງິນທີ່ເໝາະສົມໃຫ້ແກ່ປະຊາຊົນ ເພື່ອໃຫ້ປະຊາຊົນຫັນມາທ້ອນເງິນກັບສະຖາບັນການເງິນຫຼາຍກວ່າການທ້ອນເງິນທີ່ເປັນຊັບສິນຕົວຈິງ, ສັດລ້ຽງ ແລະ ວັດຖຸມີຄ່າສິ່ງດັ່ງກ່າວຈະເຮັດໃຫ້ເງິນຖືກເອົາໄປນຳໃຊ້ເຂົ້າໃນການລົງທຶນຫຼາຍຂຶ້ນ...”




ພາຍໃນງານຍັງປະກອບມີວາລະການນຳສະເໜີ ແລະ ສົນທະນາເທິງເວທີ ຈາກພາກສ່ວນທີ່ຈັດຕັ້ງປະຕິບັດວຽກງານສົ່ງເສີມການທ້ອນເງິນຄື ທຫລ, ສະຖາບັນການເງິນທີ່ຮັບເງິນຝາກເພື່ອພັດທະນາແມ່ຍິງ ແລະ ຄອບຄົວ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກເອກພັດທະນາ ແລະ ໂຄງການການເງິນຈຸລະພາກໃນຂົງເຂດຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ.

**# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**